ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 05 ຫາ 02 ສິງຫາ 2024



ກອງປະຊຸມປຶກສາຫາລື ສະຫຼຸບການຈັດຕັ້ງປະຕິບັດ ແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ກອງປະຊຸມປຶກສາຫາລື ສະຫຼຸບການຈັດຕັ້ງປະຕິບັດ ແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ການກະຕຸ້ນເສດຖະກິດ, ເພື່ອສົ່ງເສີມການຜະລິດສິນຄ້າ ທົດແທນການນຳເຂົ້າ ແລະ ສົ່ງອອກ, ແກ້ໄຂບັນຫາຕົ້ນທຶນການຜະລິດທີ່ສູງ. ສະນັ້ນ, ໃນລະຫວ່າງວັນທີ 18-19 ກໍລະກົດ 2024 ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຈັດກອງປະຊຸມປຶກສາຫາລື ສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ແລະ ກະກຽມແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ 5 ປີ (2026-2030) ຂຶ້ນ ທີ່ຫ້ອງປະຊຸມ ໂຮງແຮມ ອັມມະຣີ, ເມືອງວັງວຽງ, ແຂວງ ວຽງຈັນ ໂດຍການເປັນປະທານຂອງ ທ່ານ ທອງພັດ ວົງມະນີ ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້. ມີບັນດາ ຫົວໜ້າ-ຮອງຫົວໜ້າກົມ, ຮອງຫົວໜ້າຫ້ອງການກະຊວງ, ສະຖາບັນ, ຫົວໜ້າ-ຮອງຫົວໜ້າສູນ ຂັ້ນ 2, ຕາງໜ້າອົງການອາຫານ ແລະ ການກະເສດ (FAO), ພ້ອມດ້ວຍພາກສວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນກອງປະຊຸມ ທ່ານ ປອ. ບຸນເດດ ສຸດທະວິໄລ ຫົວໜ້າກົມແຜນການ ແລະ ການຮ່ວມມື ໄດ້ຂຶ້ນນຳສະເໜີ ກ່ຽວກັບ ບົດສະຫຼຸບຮອບດ້ານ ແລະ ຜົນສຳເລັດຂອງການຈັດຕັ້ງປະຕິບັດແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ 5 ປີ ຄັ້ງທີ 9 (2021-2025) ຄື: ແຜນງານຄ້ຳປະກັນສະບຽງອາຫານ: ການຜະລິດເຂົ້າ: ປະຕິບັດໄດ້ ສະເລ່ຍ 3,72 ລ້ານໂຕນ/ປີ, ຊຶ່ງສາມາດບັນລຸໄດ້ຕາມແຜນການ, ການຜະລິດພືດສະບຽງອາຫານ ປະຕິ

ບັດໄດ້ ສະເລ່ຍ 2,31 ລ້ານໂຕນ/ປີ ທຽບໃສ່ແຜນການປະຕິບັດໄດ້ລື່ນແຜນການ 8%; ການຜະລິດຊີ້ນ, ໄຂ່ ແລະ ປາ: ຜະລິດໄດ້ 507.000 ກວ່າໂຕນ ຫຼື ເທົ່າກັບ 88% ຂອງແຜນການ; ແຜນງານຜະລິດກະສິກຳເປັນສິນຄ້າ:ດ້ານການສົ່ງອອກ ໃນໄລຍະ 3 ປີ ຜ່ານມາ ປະຕິບັດໄດ້ 3,168 ກວ່າລ້ານໂດລາ; ແຜນງານຄຸ້ມຄອງ ປົກປັກຮັກສາປ່າໄມ້: ການປູກໄມ້ ລວມທັງການປູກໄມ້ອຸດສະຫະກຳ: ມາຮອດປັດຈຸບັນ ສາມາດປະຕິບັດໄດ້ 32,270 ເຮັກຕາ ເທົ່າກັບ 16% ຂອງແຜນການ (200,000 ເຮັກຕາ); ແຜນງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ: ຜ່ານການເກັບກຳຂໍ້ມູນ ຕາມດຳລັດ 348/ລບ ໂດຍອີງໃສ່ຂໍ້ມູນຕົວຕັ້ງໃນ 2 ປີ ຜ່ານມາ ຮອດປັດຈຸບັນ ສາມາດຈັດຕັ້ງປະຕິບັດໄດ້ຄື: ສ້າງຄອບຄົວພົ້ນທຸກ ຄາດໝາຍ 5 ປີ 204,360 ຄອບຄົວ ປະຕິບັດໄດ້ 97,506 ຄອບຄົວ ເທົ່າກັບ 48%, ສ້າງບ້ານໃຫຍ່ເປັນຕົວເມືອງນ້ອຍໃນຊົນນະບົດ ຄາດໝາຍ 5 ປີ 10 ບ້ານປະຕິບັດໄດ້ 16 ເທົ່າກັບ 160%. ທີ່ປະຊຸມ ໄດ້ຮັບຟັງການນຳສະເໜີການເຊື່ອມສານແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ເຂົ້າກັບນະໂຍບາຍຕ່າງໆ. ພ້ອມທັງມີການແບ່ງກຸ່ມຄົ້ນຄວ້າ ຕາມແຜນງານ ແລະ ຄຳຖາມເຈາະຈີ້ມ ເພື່ອພ້ອມກັນ ສະຫຼຸບຕີລາຄາ ແລະ ກຳນົດແຜນງານໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ.









ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສີງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳພອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ;